# ພໍ່ແມ່ກໍນັບຄືກັນ

## ຊ່ວຍລູກທ່ານໃນເຣື່ອງ - ຮູບແບບ ແລະ ເລກ ອາລຈິບຣາ

ຮູບແບບເກີດຂຶ້ນໃນຫຼາຍສະຖານະການຂອງທຸກໆມື້. ເລກອາລຈິບຣາແມ່ນວິທີນຶ່ງທີ່ເປັນຕົວແທນຮູບແບບ. ເພື່ອຮູ້ຈັກຮູບແບບອັນນຶ່ງ ພວກເດັກນ້ອຍ ຕ້ອງການມີຄວາມເຂົ້າໃຈອັນແຈ່ມແຈ້ງວ່າຮູບແບບ ແມ່ນຫຍັງ. ໃນວິຊາເລກ ຄຳວ່າຮູບແບບແມ່ນການເວົ້າເຖິງແບບທີ່ເຮັດຊ້ຳເລື້ອຍໆ. ໃນປີຕົ້ນໆຂອງໂຮງຮຽນປະຖົມ ພວກເດັກນ້ອຍຈະຮຽນຈື່ ເຮັດ ອະທິບາຍ ແລະສືບຕໍ່ເຮັດຊ້ຳແບບເກົ່າ. ພວກເຂົາຕ້ອງຈື່ວ່າມີຈັກສ່ວນ(ພາກສ່ວນ)ຈຶ່ງເຮັດໃຫ້ເປັນຮູບແບບອັນນຶ່ງ.  ຕາມທຳອິດແລ້ວ ຮູບແບບເຫຼົ່ານີ້ອາດຈະຖືກເຮັດມາຈາກຮູບຊົງ ຈາກວັດຖຸ ຫຼື ຮູບຕ່າງໆ ກ່ອນທີ່ຈະຍ້າຍໄປສູ່ຮູບແບບຕົວເລກ. ໃນເວລາທີ່ພວກເດັກນ້ອຍກ້າວຜ່ານຫຼາຍປີໃນຊັ້ນປະຖົມ ພວກເຂົາຈະຮຽນຊອກຫາຕົວເລກທີ່ຫາຍໄປຈາກຮູບແບບ ແລະ ຈະຄົ້ນພົບການພົວພັນລະຫວ່າງການບວກ ແລະ ການລົບ ແລະ ການຄູນ ແລະ ການຫານ.  ພວກເຂົາຍັງຈະອະທິບາຍຮູບແບບເປັນ ຄວາມເວົ້າ ແລະ ຈະສາມາດກຳນົດຫຼັກການທີ່ຈະອະທິບາຍຮູບແບບອັນນຶ່ງໄດ້. ພວກນັກຮຽນຢູ່ຊັ້ນມັທຍົມ ຈະຮຽນການໃຊ້ຕົວໜັງສືເພື່ອແທນຕົວເລກ ແລະເພື່ອເຂົ້າໃຈວ່າຕົວໜັງສືຕົວນຶ່ງສາມາດຢືນຢູ່ແທນບ່ອນຕົວເລກ ແລະ ວັດຖຸໄດ້.

ຕົວຢ່າງເຊັ່ນ ທັມມະດາພວກນັກຮຽນຈະຮຽນເຣື່ອງ ຄວາມສຳພັນລະຫວ່າງຕົວເລກ ເຊັ່ນ 3+4 = 4+3. ເພື່ອຈະອະທິບາຍຄວາມສຳພັນແບບທັມມະດາກໍຄື 3 ແລະ 4 ສາມາດຖືກແທນທີ່ດ້ວຍຕົວໜັງສື *a* ແລະ *b* ດັ່ງນັ້ນ  ພວກເຮົາສາມາດເວົ້າໄດ້ວ່າ $a+b = b+a$

ຕົວໜັງສື *a* ແລະ *b* ແທນເລກສອງຕົວໃດໆຂອງວັດຖຸນັ້ນ. ຕົວເລກຂອງວັດຖຸອາດຈະປ່ຽນ ແຕ່ວ່າ ຄວາມສຳພັນນັ້ນຈະຍັງຢູ່ຄືເກົ່າ.

### ທ່ານເຮັດຫຍັງໄດ້ແດ່ຢູ່ບ້ານ?

ກັບເດັກນ້ອຍ:

- ໃນເວລາຍ່າງຕາມຖນົນຈົ່ງໂອ້ລົມກັບລູກທ່ານເຣື່ອງນຳເບີເຮືອນຢູ່ຕາມ ຖນົນ ແລະ ຂໍໃຫ້ລູກທ່ານອະທິບາຍວ່າ  ມີຫຍັງເກີດ ຂຶ້ນຕໍ່ນຳເບີນັ້ນ.
- ເບິ່ງຕົວຢ່າງຈາກເຈັ້ຍຕິດຝາເຮືອນແລະເວົ້າລົມກ່ຽວກັບຮູບ ແບບນັ້ນ. *ມີຈັກພາກ ຫຼື ສ່ວນທີ່ຮວມເປັນຮູບແບບນີ້? ຮູບແບບ ເລີ້ມຈາກໃສ? ມັນມີຊ້ຳກັນຈັກເທື່ອທົ່ວເຈັ້ຍແຜ່ນນີ້?*
- ໃຫ້ລູກທ່ານເຮັດເຈັ້ຍສຳລັບຫໍ່ຂອງທີ່ມີຮູບແບບຊ້ຳກັນ ຢູ່ເທິງນັ້ນ.
- ຫຼິ້ນເກມທີ່ພົວພັນກັບການເຄື່ອນໄຫວຂອງຮ່າງກາຍ ເຊັ່ນ  ຕົບມື ແລະທຶບຕີນ. ຂໍໃຫ້ລູກທ່ານເຮັດຊ້ຳແບບ ເກົ່າ ແລະ ໃຫ້ເຮັດເປັນຮູບແບບເພື່ອໃຫ້ທ່ານເຮັດຊ້ຳ.
- ໃຫ້ລູກທ່ານໃຊ້ໜ່ວຍໝາກປັດ, ກະດຸມ ຫຼື ຂໍໜີບເສື້ອ ເພື່ອເຮັດຮູບແບບທີ່ຊ້ຳກັນ ແລະ ເວົ້າໃຫ້ທ່ານຟັງກ່ຽວ ກັບຮູບແບບນີ້.  ຮູບແບບສາມາດເຮັດຈາກ ສີ  ຂນາດ ຮູບຊົງ ຫຼື ສິ່ງຂອງ (ຕົວຢ່າງ: ຂໍໜີບເສື້ອ, ຂໍໜີບເສື້ອ, ບ່ວງ, ຂໍໜີບເສື້ອ, ຂໍໜີບເສື້ອ, ບ່ວງ). ຂໍໃຫ້ລູກທ່ານບັນຍາຍຮູບແບບນັ້ນ ແລະ ບອກທ່ານວ່າມີຈັກວັດຖຸທີ່ ຮວມເຂົ້າເປັນແຕ່ລະຮູບແບບ.

- ໃຊ້ສິ່ງຂອງອັນເກົ່າວາງແບບບໍ່ເລືອກບ່ອນ ແລະ ຂໍໃຫ້ ລູກທ່ານອະທິບາຍໃຫ້ທ່ານຟັງວ່າມັນແມ່ນຮູບແບບຫຼືບໍ່.
- ຂໍໃຫ້ລູກທ່ານເຮັດຮູບແບບຫຼາຍອັນເທົ່າທີ່ຈະຫຼາຍໄດ້ຈາກ ຂໍໜີບເສື້ອສີຟ້າສາມອັນ ສີຂາວສາມອັນ ແລະ ສີແດງ ສາມອັ້ນ.

## ກັບເດັກທີ່ໃຫຍ່ຂື້ນໄປອີກ

- ຊ່ວຍລູກທ່ານປະດິດເຄື່ອງເອ້ດ້ວຍໝ່ວຍໝາກປັດ
- ສອນລູກທ່ານຖັກໄໝພົມ.  ຕາມປົກກະຕິ ການເພີ້ມ ຫຼື ການຫຼຸດ ຈຳນວນ ເກາະ ຈະເປັ້ນໄປຕາມຮູບແບບ.
- ແບບຂອງສວນດອກໄມ້ ແລະ ເຮືອນຈະຮວມເອົາ ພາກສ່ວນຂອງຮູບແບບເລື້ອຍໆ. ຕົວຢ່າງເຊັ່ນ ຮົ້ວ ຫຼື ເຂດທີ່ປູດ້ວຍຫີນຈະຮວມເອົາຮູບແບບທີ່ຈັດວາງໄວ້.  ຂໍໃຫ້ລູກທ່ານບັນຍາຍຮູບແບບນັ້ນ.



- ຊອກຫາຮູບແບບຂອງຕົວເລກຢູ່ຕາມປະຕິທິນ. ເປັນຫຍັງຈິ່ງມີຮູບແບບເຫຼົ່ານີ້?
- ເວລາຂັບຣົດໄປທາງໄກ ຈິ່ງຫຼິ້ນເກມຕົວເລກເພື່ອຊອກຫາ ຮູບແບບ ເຊັ່ນ *ທວາຍເລກ(x) ຂອງຂ້ອຍ. ຕົວຢ່າງ,*
  - *ເລກ (x) ຂອງຂ້ອຍແມ່ນຢູ່ລະຫວ່າງ 20 ກັບ 5 ມັນແມ່ນ ເລກຄູ່ ແລະ ຄູນ 3.*
- ເວລາເບິ່ງເກມກິລາ ຈິ່ງຄິດໄລ່ຄະແນນ ຫຼື ຊອກຫາ ທາງທີ່ເປັນໄປໄດ້ຂອງການປະສົມຂອງຄະແນນ.   ຕົວຢ່າງ:
  - ທີມ ສະວອນສ໌ ທຳຄະແນນໄດ້ 4ປະຕູ ແລະ ນຳຫຼັງເຂົາ 3ປະຕູໃນເວລາສິບຫ້ານາທີທຳອິດ.  ພວກເຂົາທຳຄະແນນ ໄດ້ຈັກປະຕູ?
  - ທີມ ບູລດອກສ໌ ທຳຄະແນນໄດ້ 12ຄະແນນໃນຊ່ວງ ເຄິ່ງເວລາທີນຶ່ງ. ຄະແນນນີ້ມີການປະສົມຂອງການເຕະ ເຂົ້າ ແລະ ການທຳປະຕູຢ່າງລະຈັກເທື່ອ?

